ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 215/ຄປຈ

ຄະນະປະຈຳ ນະຄອນຫລວງວຽງຈັນ, ວັນທີ 29 DEC 2009

# ມະຕິຕົກລົງ

## ຂອງຄະນະປະຈຳສະພາແຫ່ງຊາດ

## ກ່ຽວກັບການຕີຄວາມໝາຍຂອງ ຄຳວ່າ ຄ່າທຳນຽມ, ຄ່າທຳນຽມນຳໃຊ້ທີ່ດິນ ແລະ ຄ່າພາສີທີ່ດິນ

------------------

- ອີງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ມາດຕາ 56, ຂໍ້ 2 ກ່ຽວກັບສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ໃນການຕີຄວາມໝາຍ ລັດຖະທຳມະນູນ ແລະ ກົດໝາຍ.
- ອີງຕາມໜັງສືສະເໜີຂອງ ທ່ານນາຍົກລັດຖະມົນຕີ ສະບັບເລກທີ 088/ນຍ, ລົງວັນທີ 19 ສິງຫາ 2009 ກ່ຽວກັບການສະເໜີໃຫ້ ຄະນະປະຈຳສະພາແຫ່ງຊາດ ຕີຄວາມໝາຍຂອງຄຳວ່າ ຄ່າທຳນຽມ, ຄ່າທຳນຽມນຳໃຊ້ທີ່ດິນ ແລະ ຄ່າພາສີທີ່ດິນ ທີ່ໄດ້ກຳນົດໄວ້ໃນນິຕິກຳ.
- ອີງຕາມການຕົກລົງຂອງກອງປະຊຸມ ຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 22 ກັນຍາ 2009.

ຜ່ານການຄົ້ນຄວ້າປະກອບຄຳເຫັນຂອງ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໂດຍໄດ້ຍົກໃຫ້ເຫັນບັນຫາຕ່າງໆ ໃນການຈັດຕັ້ງປະຕິບັດບັນດານິຕິກຳ ທີ່ມີຄຳສັບ "ຄ່າທຳນຽມທີ່ດິນ", "ຄ່າທຳນຽມນຳໃຊ້ທີ່ດິນ", "ຄ່າພາສີທີ່ດິນ" ຂອງຂະແໜງການກ່ຽວຂ້ອງ ໃນໄລຍະຜ່ານມາ. ເພື່ອຄວາມເຂົ້າໃຈຢ່າງເປັນເອກະພາບຕໍ່ກັບບັນດາຄຳສັບດັ່ງກ່າວ ແລະ ຮັບປະກັນໃນການຈັດຕັ້ງປະຕິບັດບັນດານິຕິກຳເຫລົ່ານັ້ນ ຢ່າງມີປະສິດທິຜົນສູງ.

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

ມາດຕາ 1. ເຫັນດີໃຫ້ປ່ຽນ "ພາສີທີ່ດິນ" ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ແລະ ນິຕິກຳຕ່າງໆ ມາເປັນ "ຄ່າທຳນຽມນຳໃຊ້ທີ່ດິນ".

ມາດຕາ 2. ໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເປັນຜູ້ເກັບຄ່າທຳນຽມນຳໃຊ້ທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008.

ມາດຕາ 3. ມອບໃຫ້ລັດຖະບານ ເປັນຜູ້ຈັດຕັ້ງປະຕິບັດ ມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ປະທານ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ